ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ເລກທີ 116 /ກຕສ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2026

# ຂໍ້ຕົກລົງ

# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືແຈ້ງຕອບ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 1965/ຄຈສພ, ລົງວັນທີ 29 ຕຸລາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ສະບັບເລກທີ      /ຈຕ, ລົງວັນທີ      ມັງກອນ 2026.

## ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງ ຫ້ອງການ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການ ແນໃສ່ຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງສຸດ.

### ມາກາຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຫ້ອງການ ຂຽນເປັນຕົວອັກສອນຫຍໍ້ວ່າ “ຫກ” ຂຽນເປັນພາສາອັງກິດ “Cabinet” ຂຽນຫຍໍ້ “CBN” ແມ່ນກົງຈັກການຈັດຕັ້ງໜຶ່ງຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະນຳກະຊວງ ໃນການເປັນໃຈກາງປະສານງານພາຍໃນ-ພາຍນອກ ທາງດ້ານວຽກງານນິຕິກຳ, ຄົ້ນຄວ້າສັງລວມ, ເລຂານຸການ, ບໍລິຫານ, ພິທີການ, ການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ, ປະຊາສຳພັນ, ຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຫ້ອງການ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ວາງອອກ;
2. ຄົ້ນຄວ້າ, ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານ ນິຕິກຳ, ຄົ້ນຄວ້າ ສັງລວມ, ເລຂານຸການ, ບໍລິຫານ, ພິທີການ, ການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ, ປະຊາສຳພັນ, ຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ;
3. ຄົ້ນຄວ້າຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບການຂອງລັດ, ແຜນຍຸດທະສາດ, ແຜນພັດທະນາຂອງ ກະຊວງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດແຕ່ລະໄລຍະ;
4. ຄົ້ນຄວ້າ ແລະ ກະກຽມບົດປະກອບຄຳເຫັນ, ບົດໂອ້ລົມ, ບົດຖະແຫຼງການ, ເອກະສານທາງລັດຖະການ, ບົດລາຍງານ ແລະ ບົດສະຫຼຸບຕ່າງໆຂອງຂະແໜງການ ໃຫ້ຄະນະນຳກະຊວງ, ສົ່ງຫ້ອງວ່າການລັດຖະບານ, ຫ້ອງວ່າການປະທານປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
5. ຊຸກຍູ້, ຕິດຕາມ ແລະ ສັງລວມ ການຈັດຕັ້ງປະຕິບັດວຽກງານແຕ່ລະໄລຍະໃນທົ່ວຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ເພື່ອລາຍງານໃຫ້ຄະນະນຳກະຊວງ;
6. ຄຸ້ມຄອງເອກະສານຂາເຂົ້າ-ຂາອອກ ແລະ ການຈໍລະຈອນເອກະສານດ້ວຍລະບົບເອເລັກໂຕຣນິກຢູ່ພາຍໃນກະຊວງ ໃຫ້ເປັນລະບົບລະບຽບ, ວ່ອງໄວ ແລະ ຖືກຕ້ອງຊັດເຈນໃນດ້ານຮູບແບບ, ດ້ານນິຕິໄນ ແລະ ຮັກສາໄດ້ອັນເປັນຄວາມລັບ; ຮັບ ແລະ ສົ່ງເອກະສານທາງລັດຖະການໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ແກ້ໄຂ; ເຂົ້າເລກທີ, ປະທັບກາ, ສຳເນົາ ແລະ ສົ່ງຄືນໃຫ້ພາກສ່ວນກ່ຽວຂ້ອງນຳສົ່ງເອກະສານທາງລັດຖະການຂອງກະຊວງ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກະກຽມເນື້ອໃນ ແລະ ວາລະຂອງກອງປະຊຸມໃຫ້ຄະນະນຳກະຊວງ, ບັນທຶກ ແລະ ແຈ້ງການກ່ຽວກັບຜົນຂອງກອງປະຊຸມໃຫ້ພາກສ່ວນກ່ຽວຂ້ອງທັງພາຍໃນກະຊວງ ແລະ ພາຍນອກ;
8. ຮຽບຮຽງ, ກວດຜ່ານຄວາມຖືກຕ້ອງຂອງເອກະສານຕ່າງໆ ກ່ອນສະເໜີ, ລາຍງານ, ຂໍຄຳເຫັນຊີ້ນຳ, ຂໍການຕົກລົງ ແລະ ຂໍລາຍເຊັນ ຈາກຄະນະນຳກະຊວງ;
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທາງດ້ານວຽກງານພິທີການ, ກະກຽມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງຄະນະນຳກະຊວງ ຢູ່ ສູນກາງ-ທ້ອງຖິ່ນ, ທັງພາຍໃນ ແລະ ຕ່າງປະເທດ;
10. ຄຸ້ມຄອງ ແລະ ໂຄສະນາປະຊາສຳພັນຂໍ້ມູນຂ່າວສານ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານຜ່ານສື່ຕ່າງໆຂອງກະຊວງ ແລະ ສະໜອງໃຫ້ແກ່ສື່ພາຍນອກ;
11. ປະສານສົມທົບກັບບັນດາກົມ/ທຽບເທົ່າ ໃນການນຳໃຊ້ອຸປະກອນໄອຊີທີ, ເຄືອຂ່າຍອິນເຕີເນັດ ແລະ ຄຸ້ມຄອງອຸປະກອນຮັບໃຊ້ລະບົບຫ້ອງການທັນສະໄໝ ພາຍໃນກະຊວງ;
12. ຂື້ນແຜນງົບປະມານໃນການຈັດຊື້, ກໍ່ສ້າງ, ສ້ອມແປງອາຄານ, ພາຫະນະ, ວັດຖຸອຸປະກອນຕ່າງໆພາຍໃນກະຊວງ;

13. ຄົ້ນຄວ້າ, ປັບປຸງການໂຄງປະກອບການຈັດຕັ້ງ, ຊັບຊ້ອນບຸກຄະລາກອນ ແລະ ກຳນົດຕຳແໜ່ງງານຂອງຫ້ອງການ ໃຫ້ສອດຄ່ອງໃນແຕ່ລະໄລຍະ;
14. ປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານປ້ອງກັນເວນຍາມສຳນັກງານ, ຮັກສາຄວາມສະຫງົບ ແລະ ຄວາມປອດໄພພາຍໃນກະຊວງ;
15. ເປັນເສນາທິການໃຫ້ແກ່ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນການສຶກສາ, ຄົ້ນຄວ້າບັນດາແນວທາງ, ນະໂຍບາຍ, ນິຕິກຳ, ວິໄສທັດ, ແຜນດຳເນີນງານແຫ່ງຊາດ, ແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ;
16. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ;
17. ຈັດກອງປະຊຸມປະຈຳປີ, ກອງປະຊຸມປົ່ນອ້ອມ ຂອງກະຊວງ ຕາມການຕົກລົງເຫັນດີຂອງຄະນະນຳກະຊວງ;
18. ປະສານງານການພົວພັນຮ່ວມມື ທັງພາຍໃນ-ຕ່າງປະເທດ ໃນຂອບ ອາຊຽນ, ສອງຝ່າຍ, ອະນຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ເພື່ອຂົນຂວາຍ ຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ, ເຕັກນິກ ແລະ ວິຊາການ ເຂົ້າໃສ່ການພັດທະນາຂະແໜງເຕັກໂນໂລຊີ ແລະການສື່ສານ;
19. ປະສານງານກັບບັນດາກົມ/ທຽບເທົ່າ ໃນການກະກຽມຮ່າງບົດບັນທຶກຄວາມເຂົ້າໃຈ, ສັນຍາ ແລະ ເອກະສານການຮ່ວມມື ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງເກັບກຳ ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນການຕ່າງໆ ທີ່ໄດ້ຮັບຮອງ;
20. ເປັນເສນາທິການໃຫ້ແກ່ຄະນະນຳກະຊວງ ໃນການຄົ້ນຄວ້າ ແລະ ປະກອບຄຳເຫັນທາງດ້ານເນື້ອໃນຕໍ່ການພົບປະ, ການປະຊຸມ, ການເຈລະຈາ, ການເຊັນສັນຍາ ແລະ ເອກະສານຕ່າງໆໃນຂົງເຂດວຽກງານເຕັກໂນໂລຊີ ແລະ ການສື່ສານ;
21. ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບວຽກງານໃນຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຕາມການມອບໝາຍຂອງຄະນະນຳກະຊວງ;
22. ປະສານງານກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການຄຸ້ມຄອງ, ສ້າງບັນຊີກິດຈະການວຽກງານການສົ່ງເສີມການລົງທຶນ ທີ່ຕິດພັນກັບວຽກງານຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ;
23. ເຈລະຈາຍາດແຍ່ງທຶນການຊ່ວຍເຫຼືອ ທັງພາຍໃນ ແລະ ຕ່າງປະເທດ ເພື່ອມາພັດທະນາຂະແໜງການ ເຕັກໂນໂລຊີ ແລະການສື່ສານ;
24. ປະສານງານກັບພາສ່ວນທີ່ກ່ຽວຂ້ອງ ໃນການອະນຸຍາດການດຳເນີນທຸລະກິດ ທີ່ຕິດພັນກັບຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຜ່ານລະບົບປະຕູດຽວ;
25. ເປັນໃຈກາງ ໃນການຄົ້ນຄວ້າ, ສ້າງ, ປັບປຸງ ນະໂຍບາຍ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ, ປະກອບຄຳເຫັນໃສ່ ບັນດານິຕິກຳ ຂອງຂະແໜງ ການອື່ນ;
26. ຝຶກອົບຮົມ ແນະນຳທາງດ້ານວິຊາການໃຫ້ບັນດາກົມ/ທຽບເທົ່າ, ພະແນກເຕັກໂນໂລຊີ ແລະ ການສື່ສານນະຄອນຫຼວງ, ແຂວງ ໃນການສ້າງ ແລະ ປັບປຸງນິຕິກຳ;
27. ເປັນໃຈກາງ ໃນການຕິດຕາມ, ກວດກາ, ການໂຄສະນາ ເຜີຍແຜ່ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂະແໜງເຕັກໂນໂລຊີ ແລະ ການສື່ສານ;

28. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຄະນະນຳກະຊວງ.

**ມາດຕາ 4 ຂອບເຂດສິດ**

ຫ້ອງການ ມີສິດ ດັ່ງນີ້:

1. ຜັນຂະຫຍາຍແນວທາງແຜນນະໂຍບາຍຂອງພັກ, ລະບຽບການຂອງລັດ, ແຜນຍຸດທະສາດ, ແຜນພັດທະນາຂອງກະຊວງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດແຕ່ລະໄລຍະ ເພື່ອຈັດຕັ້ງປະຕິບັດ;
2. ອອກຂໍ້ຕົກລົງ, ແຈ້ງການ ແລະ ເອກະສານອື່ນໆ ຕາມພາລະບົດບາດ ແລະ ໜ້າທີ່ ຂອງຫ້ອງການທີ່ໄດ້ກຳນົດໄວ້;
3. ພົວພັນ ແລະ ປະສານສົມທົບ ກັບທຸກພາກສ່ວນທີ່ຂຶ້ນກັບກະຊວງ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ ແລະ ບັນດາສະຖາທູດປະຈຳ ສປປ ລາວ, ເຈົ້າໜ້າທີ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ສູນກາງ-ທ້ອງຖິ່ນ ທີ່ພົວພັນກັບວຽກງານຂອງກະຊວງ;
4. ປະສານງານດ້ານວຽກງານພິທີການກັບພາກສ່ວນທີ່ກ່ຽວຂ້ອງ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ;
5. ປະສານສົມທົບກັບບັນດາກົມ/ທຽບເທົ່າ ເພື່ອສ້າງຂະບວນການຕ່າງໆ ໃນວັນສຳຄັນຂອງຊາດ ແລະ ສາກົນ;
6. ຄຸ້ມຄອງ, ກວດກາເນື້ອໃນ, ສັງລວມຂໍ້ມູນ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ ຜ່ານສື່ຕ່າງໆ ທັງພາຍໃນ ແລະ ພາຍນອກ;
7. ປະສານງານສົມທົບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳໃຊ້ເຄື່ອງອຸປະກອນ ໄອຊີທີ ແລະ ລະບົບຫ້ອງການທັນສະໄໝ ພາຍໃນກະຊວງ;
8. ສະເໜີຍ້ອງຍໍ, ແຕ່ງຕັ້ງ, ຊັບຊ້ອນ ພະນັກງານພາຍໃນຫ້ອງການ;
9. ຄຸ້ມຄອງເອກະສານຂາເຂົ້າ-ຂາອອກ ແລະ ການຈໍລະຈອນເອກະສານແບບເຈ້ຍ ແລະ ແບບເອເລັກໂຕຣນິກ;
10. ຂຶ້ນແຜນນຳໃຊ້ງົບປະມານບໍລິຫານຂອງຫ້ອງການ ແລະ ກະຊວງ;
11. ຄຸ້ມຄອງ, ນຳໃຊ້, ຈັດສັນພາຫະນະ, ບຳລຸງຮັກສາ-ສ້ອມແປງອຸປະກອນ ພ້ອມທັງແຕ່ງຕັ້ງຄະນະຈັດຊື້-ຈັດຈ້າງ;
12. ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດວຽກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃນຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
13. ສະເໜີເຂົ້າຮ່ວມພົບປະ, ເຈລະຈາ ແລະ ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກ ແລະ ເອກະສານຮ່ວມມືກັບບັນດາອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ;
14. ສະເໜີເປັນເຈົ້າພາບ ຫຼື ເປັນເຈົ້າພາບຮ່ວມກັບສາກົນ ຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານການຮ່ວມມື ຢູ່ ສປປ ລາວ;
15. ສ້າງ ແລະ ປັບປຸງລະບຽບການຄຸ້ມຄອງ, ສ້າງບັນຊີກິດຈະການວຽກງານສົ່ງເສີມການລົງທຶນ ທີ່ຕິດພັນກັບຂົງເຂດວຽກງານ ເຕັກໂນໂລຊີ ແລະ ການສື່ສານ;
16. ເຈລະຈາຍາດແຍ່ງທຶນການຊ່ວຍເຫຼືອ ທັງພາຍໃນ ແລະ ຕ່າງປະເທດ ເພື່ອມາພັດທະນາຂະແໜງການ ເຕັກໂນໂລຊີ ແລະການສື່ສານ;

17. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການອະນຸຍາດດຳເນີນທຸລະກິດພາກລັດ ແລະ ເອກະຊົນ ຜ່ານລະບົບປະຕູດຽວ;
18. ຈັດພິມ ແລະ ໂຄສະນາເຜີຍແຜ່ ບັນດານິຕິກຳຂອງ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
19. ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສາມສ້າງ ຕາມການຕົກລົງເຫັນດີ ຂອງຄະນະນຳກະຊວງ;
20. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງ ຄະນະນຳກະຊວງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ຫ້ອງການ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ພະແນກນິຕິກຳ;
2. ພະແນກສັງລວມ ແລະ ເລຂານຸການ;
3. ພະແນກບໍລິຫານ ແລະ ພິທີການ;
4. ພະແນກຮ່ວມມືສາກົນ;
5. ພະແນກປະຊາສຳພັນ ແລະ ຂໍ້ມູນຂ່າວສານ;
6. ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ຫ້ອງການ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າຫ້ອງການ 01 ທ່ານ, ຮັບຜິດຊອບຕໍ່ຄະນະນຳກະຊວງ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຫ້ອງການ ຕາມທີ່ກຳນົດໄວ້ໃນ ມາດຕາ 3, ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້;
2. ໃນເວລາຕິດຂັດ ຫົວໜ້າຫ້ອງການຕ້ອງມອບສິດໃຫ້ຮອງຫົວໜ້າຫ້ອງການທ່ານໃດໜຶ່ງເປັນຜູ້ຮັກສາການແທນ;
3. ຮອງຫົວໜ້າຫ້ອງການຈຳນວນໜຶ່ງ ຊ່ວຍວຽກຫົວໜ້າຫ້ອງການ ຊີ້ນຳວຽກງານໃດໜຶ່ງຕາມການແບ່ງງານ ແລະ ການມອບໝາຍ ຮັບຜິດຊອບຕໍ່ຫົວໜ້າຫ້ອງການ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງວຽກງານໃດໜຶ່ງຕາມທີ່ຕົນໄດ້ຊີ້ນຳ ແລະ ການມອບໝາຍຂອງຫົວໜ້າຫ້ອງການ;
4. ຮອງຫົວໜ້າຫ້ອງການຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນໃຫ້ຫົວໜ້າຫ້ອງການ ພາຍຫຼັງກັບມາປະຈຳການ;
5. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມທີ່ກຳນົດໄວ້ໃນຕຳແໜ່ງງານ;

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

# ໝວດທີ 4

## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງ ພະແນກນິຕິກຳ**

ພະແນກນິຕິກຳ ມີໜ້າທີ່ດັ່ງນີ້:

1. ສັງລວມນິຕິກຳ, ແຜນການສ້າງ ຫຼື ປັບປຸງ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງກົມ, ສູນ, ອົງການ ແລະ ສະຖາບັນ ພາຍໃນ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ສັງລວມ, ຕິດຕາມ ບັນດາກົດໝາຍ, ດຳລັດ, ແຜນຍຸດທະສາດ ຂອງກົມ, ສູນ, ອົງການ ແລະ ສະຖາບັນ ພາຍໃນ ກະຊວງເຕັກໂນໂລຊີ ແລະ ການສື່ສານ ທີ່ຈະນຳສະເໜີເຂົ້າພິຈາລະນາໃນກອງປະຊຸມລັດຖະບານ ປະຈຳປີ;
3. ເປັນເຈົ້າການໃນການປະສານສົມທົບກັບບັນດາກົມ ກວດກາຄວາມສອດຄ່ອງດ້ານນິຕິກຳຂອງບົດບັນທຶກ ຄວາມເຂົ້າໃຈ, ສັນຍາຮ່ວມມື ແລະ ສັນຍາອື່ນ ກ່ອນນຳສະໜີ ຄະນະນຳກະຊວງ ພິຈາລະນາລົງນາມ;
4. ຄົ້ນຄວ້າ, ປຶກສາຫາລື, ເຈລະຈາ, ປະກອບຄຳເຫັນທາງດ້ານນິຕິກຳຕໍ່ການສ້າງ, ປັບປຸງ, ຕໍ່ອາຍຸ ຫຼື ອື່ນໆ ຂອງບົດບັນທຶກຄວາມເຂົ້າໃຈ, ສັນຍາຮ່ວມມື ແລະ ສັນຍາຂອງໂຄງການລົງທຶນ;
5. ເກັບກຳ, ສັງລວມ, ຕິດຕາມ ແລະ ປະເມີນຜົນບົດບັນທຶກຄວາມເຂົ້າໃຈ, ສັນຍາຮ່ວມມື ແລະ ສັນຍາອື່ນທີ່ ຈັດຕັ້ງປະຕິບັດໃນແຕ່ລະໄລຍະ ເພື່ອລາຍງານຄະນະນຳຮັບຊາບ ພ້ອມທັງສົມທົບກັບກົມວິຊາການ ເພື່ອ ສ້າງຄວາມເຂົ້າໃຈຕໍ່ບົດບັນທຶກຄວາມເຂົ້າໃຈ, ສັນຍາຮ່ວມມື ແລະ ສັນຍາ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
6. ເປັນຈຸດປະສານງານວຽກງານລົງທຶນປະຕູດຽວຂອງກະຊວງ ເພື່ອສັງລວມ, ຄົ້ນຄວ້າ ແລະ ປະກອບຄຳເຫັນ ໂດຍສົມທົບບັນດາກົມວິຊາການ ແລະ ພາກສ່ວນອື່ນໃຫ້ສອດຄ່ອງດ້ານນິຕິກຳ;
7. ຄຸ້ມຄອງຖານຂໍ້ມູນນິຕິກຳຂອງກະຊວງ;
8. ຊຸກຍູ້, ຕິດຕາມ ແລະ ເຂົ້າຮ່ວມ ການຄົ້ນຄວ້າ, ສ້າງ ຫຼື ປັບປຸງ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໃຫ້ທັນຕາມແຜນການທີ່ໄດ້ກຳນົດໄວ້ ພ້ອມທັງລາຍງານຕໍ່ຄະນະ ຫ້ອງການ, ຄະນະນຳກະຊວງ ເປັນແຕ່ລະໄລຍະ;
9. ຄົ້ນຄວ້າປະກອບຄຳເຫັນ, ເຂົ້າຮ່ວມກອງປະຊຸມ ຕໍ່ຮ່າງນິຕິກຳ ຂອງບັນດາກະຊວງ, ອົງການ ຕາມການມອບໝາຍ;
10. ກວດກາ, ຮຽບຮຽງ ແລະ ຢັ້ງຢືນຄວາມຖືກຕ້ອງເປັນຄັ້ງສຸດທ້າຍ ຂອງຮ່າງຂໍ້ຕົກລົງ, ຄຳແນະນຳ ຂອງກົມ, ສູນ, ອົງການ ແລະ ສະຖາບັນ ກ່ອນນຳສະເໜີຄະນະນຳກະຊວງພິຈາລະນາຮັບຮອງລົງລາຍເຊັນປະກາດໃຊ້;
11. ປະສານສົມທົບກັບບັນດາກົມ, ສູນ, ອົງການ ແລະ ສະຖາບັນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ ການຜັນ ຂະຫຍາຍ ກົດໝາຍ ແລະ ນິຕິກຳ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
12. ປະສານສົມທົບກັບບັນດາກົມ, ສູນ, ອົງການ, ສະຖາບັນ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ເກັບກຳຂໍ້ມູນ, ສະຫຼຸບສັງລວມ, ຕີລາຄາ, ປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ ແລະ ບັນດານິຕິກຳ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ວາງອອກ;
13. ກວດກາ ແລະ ຄົ້ນຄວ້າ ນິຕິກຳຂອງຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ວາງອອກທີ່ເຫັນວ່າ ບໍ່ສອດຄອງກັບແນວທາງນະໂຍບາຍຂອງພັກ-ລັດຖະບານ ຫຼື ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

14. ນຳເອົາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ປະກາດໃຊ້ແລ້ວ ໄປລົງໃນຈົດໝາຍເຫດທາງລັດຖະການ, ກະຊວງຍຸຕິທຳ;
15. ເປັນຈຸດປະສານງານວຽກງານນິຕິກຳ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
16. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະຫ້ອງການ.

**ມາດຕາ 8 ໜ້າທີ່ຂອງ ພະແນກສັງລວມ ແລະ ເລຂານຸການ**

ພະແນກສັງລວມ ແລະ ເລຂານຸການ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ຜັນຂະຫຍາຍແຜນຍຸດທະສາດ, ແຜນພັດທະນາຂອງກະຊວງ ທີ່ຕິດພັນກັບວຽກງານຫ້ອງການ ມາເປັນແຜນການ, ແຜນງານ,ໂຄງການ ແລະ ກິດຈະກຳ ລະອຽດແຕ່ລະໄລຍະເພື່ອຈັດຕັ້ງປະຕິບັດ;
2. ຄຸ້ມຄອງ ເອກະສານຂາເຂົ້າຂອງກະຊວງ ແລະ ຫ້ອງການ ຖືກຕ້ອງຕາມລະບຽບ, ຈໍລະຈອນເອກະສານດ້ວຍລະບົບເອເລັກໂຕຣນິກ ແລະ ແບບເຈ້ຍ ຢູ່ພາຍໃນກະຊວງ ຢ່າງວ່ອງໄວ, ຖືກຕ້ອງ ແລະ ຮັກສາຄວາມລັບ, ພ້ອມທັງເປັນເຈົ້າການໃນການຄົ້ນຄວ້າກວດກາດ້ານນິຕິໄນ, ຮຽບຮຽງ, ກວດກາ ຄວາມຖືກຕ້ອງຂອງເອກະສານຕ່າງໆ ທີ່ຈະນຳສະເໜີຄະນະຫ້ອງການພິຈາລະນາ;
3. ຄຸ້ມຄອງກາປະທັບຂອງກະຊວງ, ຂອງຫ້ອງການ ແລະ ເອກະສານຂາເຂົ້າ-ຂາອອກ ຂອງກະຊວງ ແລະ ຫ້ອງການ ທັງລະບົບແບບເຈ້ຍ ແລະ ເອເລັກໂຕຣນິກ; ສົ່ງເອກະສານເຖິງພາກສ່ວນກ່ຽວຂ້ອງ ພາຍໃນກະຊວງ, ບັນດາກະຊວງ, ອົງການ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ,ນະຄອນຫຼວງ ທັງແບບເຈ້ຍ ແລະ ເອເລັກໂຕຣນິກ; ເປັນເຈົ້າການໃນການຄົ້ນຄວ້າກວດກາດ້ານນິຕິໄນ, ສັງລວມຫຍໍ້, ຮຽບຮຽງ, ກວດກາຄວາມຖືກຕ້ອງຂອງເອກະສານຕ່າງໆ ທີ່ຈະນຳສະເໜີ, ລາຍງານ, ຂໍຄຳເຫັນຊີ້ນຳ, ຂໍການຕົກລົງ, ຂໍລາຍເຊັນ ຄະນະນຳກະຊວງ ແລະ ຮັກສາຄວາມລັບ;
4. ສະຫຼຸບການຈັດຕັ້ງປະຕິບັດວຽກງານ ແລະ ແຜນການ ປະຈຳເດືອນ, ງວດ, ປີ, ກາງສະໄໝ ແລະ ທ້າຍສະໄໝ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ຂອງຫ້ອງການ ພ້ອມທັງສັງລວມການຈັດຕັ້ງປະຕິບັດວຽກງານຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ເປັນແຕ່ລະໄລຍະ;
5. ເປັນເລຂານຸການໂດຍກົງ, ສ້າງແຜນການເຄື່ອນໄຫວປະຈຳອາທິດ ແລະ ປະສານກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ພາຍນອກ ເພື່ອສະໜອງຂໍ້ມູນໃນການກະກຽມເນື້ອໃນບົດຕ່າງໆ ແລະ ເອກະສານທີ່ກ່ຽວຂ້ອງໃຫ້ແກ່ ລັດຖະມົນຕີ, ຮອງລັດຖະມົນຕີ ເພື່ອເຂົ້າຮ່ວມປະຊຸມ ທັງພາຍໃນ ແລະ ຕ່າງປະເທດ;
6. ສັງລວມຫຍໍ້ການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນ ຂອງກະຊວງ ເພື່ອລາຍງານຕໍ່ກອງປະຊຸມສ່ອງແສງປະຈຳເດືອນ;
7. ຕິດຕາມ ແລະ ສັງລວມ ການຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ, ບົດແນະນຳ ແລະ ແຈ້ງການຕ່າງໆຂອງຂັ້ນເທິງ, ການຊີ້ນຳຂອງຄະນະນຳກະຊວງຕໍ່ບັນດາກົມ/ທຽບເທົ່າ ແລະ ບັນດາພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ເພື່ອສະຫຼຸບສັງລວມ, ລາຍງານ ແລະ ຂໍທິດຊີ້ນຳຕໍ່ລັດຖະມົນຕີ, ຮອງລັດຖະມົນຕີ ເປັນແຕ່ລະໄລຍະ;
8. ເປັນໃຈກາງປະສານງານ ທັງພາຍໃນ ແລະ ພາຍນອກ ກະຊວງ, ຕິດຕາມການລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ແລະ ບັນດາກົມ/ທຽບເທົ່າ; ພ້ອມທັງຄົ້ນຄວ້າແບບແຜນວິທີກົນໄກປະສານງານ ເພື່ອສ້າງເປັນລະບຽບຄຸ້ມຄອງບໍລິຫານໃຫ້ສອດຄ່ອງເປັນແຕ່ລະໄລຍະ;
9. ສົມທົບກັບພາກສ່ວນກ່ຽວຂ້ອງຮ່າງເອກະສານທາງລັດຖະການຕ່າງໆ, ຮ່າງໝາຍນັດປະຊຸມ, ວາລະກອງປະຊຸມ, ພ້ອມທັງເຂົ້າຮ່ວມບັນທຶກກອງປະຊຸມຕ່າງໆໃຫ້ແກ່ ລັດຖະມົນຕີ, ຮອງລັດຖະມົນຕີ ແລະ ຫ້ອງການ;

10. ຄົ້ນຄວ້າ, ຂຶ້ນແຜນການຝຶກອົບຮົມດ້ານການຄຸ້ມຄອງ ວຽກງານເອກະສານ ດ້ວຍລະບົບເອເລັກໂຕຣນິກ ແລະ ແບບເຈ້ຍ ຢູ່ພາຍໃນກະຊວງ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ,ນະຄອນຫຼວງ;
11. ຂຶ້ນແຜນເຄື່ອງຮັບໃຊ້ຂອງຄະນະນຳກະຊວງ ແລະ ຄົ້ນຄວ້າສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານ ຂອງ ພະແນກ ເປັນແຕ່ລະໄລຍະ;
12. ຄຸ້ມຄອງບຸກຄະລາກອນ, ເກັບກຳສະຖິຕິ, ສັງລວມການເຄື່ອນໄຫວ ຂອງພະນັກງານ-ລັດຖະກອນພາຍໃນຫ້ອງການ; ກຳນົດຕຳແໜ່ງງານ ແລະ ຂຶ້ນແຜນຄວາມຕ້ອງການພະນັກງານ, ສະເໜີແຕ່ງຕັ້ງ, ຊັບຊ້ອນ, ປະຕິບັດລະບຽບວິໄນ ແລະ ນະໂຍບາຍຕໍ່ພະນັກງານຂອງຫ້ອງການ;
13. ສັງລວມແຜນກໍ່ສ້າງ, ຍົກລະດັບ ວຽກງານວິຊາສະເພາະ, ທິດສະດີການການເມືອງ - ການປົກຄອງ ແລະ ພາສາຕ່າງປະເທດ ໃຫ້ພະນັກງານພາຍໃນຫ້ອງການ, ປະສານສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ໃນການສ້າງແຜນພັດທະນາບຸກຄະລາກອນພາຍໃນຫ້ອງການໃນການບຳລຸງກໍ່ສ້າງຍົກລະດັບທັງໄລຍະສັ້ນ ແລະ ໄລຍະຍາວ, ທັງພາຍໃນ ແລະ ຕ່າງປະເທດ;
14. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະຫ້ອງການ.

**ມາດຕາ 9 ໜ້າທີ່ຂອງ ພະແນກບໍລິຫານ ແລະ ພິທີການ**

ພະແນກບໍລິຫານ ແລະ ພິທີການ ມີໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຫ້ອງການໃນການສຶກສາ, ຄົ້ນຄວ້າ, ຜັນຂະຫຍາຍແຜນລວມ, ແຜນຈັດຕັ້ງປະຕິບັດ ວຽກງານບໍລິຫານ ແລະ ພິທີການ ຂອງ ຫ້ອງການ ແລະ ກະຊວງ;
2. ຄຸ້ມຄອງ ແລະ ບຳລຸງຮັກສາ ການນຳໃຊ້ໄຟຟ້າ, ນ້ຳປະປາ, ແອປັບອາກາດ, ໂທລະສັບ, ວັດຖຸອຸປະກອນ, ພາຫະນະ, ທີ່ດິນ ແລະ ຊັບສິນ ຂອງກະຊວງ;
3. ປະສານກັບເຈົ້າໜ້າທີ່ ແລະ ບໍລິສັດ ເພື່ອປ້ອງກັນຄວາມສະຫງົບ, ຄວາມປອດໄພ, ຮັກສາຄວາມລະບຽບຮຽບຮ້ອຍ ແລະ ຄວາມຈົບງາມ ພາຍໃນກະຊວງ;
4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຈ້າງ, ຈັດຊື້ວັດຖຸອຸປະກອນ, ພາຫະນະ ຂອງກະຊວງ; ຂຶ້ນແຜນງົບປະມານ ແລະ ແຕ່ງຕັ້ງ ຄະນະຈັດຊື້–ຈັດຈ້າງ;
5. ຂຶ້ນແຜນຈັດຊື້ອຸປະກອນຮັບໃຊ້ ປະຈຳເດືອນ, ປະຈຳງວດ, 6 ເດືອນຕົ້ນປີ, 6 ເດືອນທ້າຍປີ ແລະ ປະຈຳປີ ຂອງບັນດາກົມ ຮັບໃຊ້ເຂົ້າໃນວຽກງານບໍລິຫານຂອງກະຊວງ ເພື່ອສົ່ງໃຫ້ພາກສ່ວນກ່ຽວຂ້ອງ;
6. ຕິດຕາມງົບປະມານຂອງກະຊວງ ແຕ່ລະງວດ, 6 ເດືອນຕົ້ນປີ, 6 ເດືອນທ້າຍປີ ແລະ ປະຈຳປີ ເພື່ອຊຳລະຄ່າ ນ້ຳປະປາ, ໄຟຟ້າ, ສ້ອມແປງ, ປ່ຽນຖ່າຍອາໄຫຼ່ ອຸປະກອນຕ່າງໆ ແລະ ອື່ນໆ;
7. ປະສານກັບພາກສ່ວນກ່ຽວຂ້ອງ ເພື່ອດຳເນີນການຊຳລະ ແລະ ຈອງປີ້ຍົນ-ລົດໄຟ ໃຫ້ແກ່ລັດຖະມົນຕີ, ຮອງລັດຖະມົນຕີ ແລະ ພະນັກງານລັດຖະກອນຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນການເດີນທາງໄປເຄື່ອນໄຫວວຽກງານທັງພາຍໃນ ແລະ ຕ່າງປະເທດ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ກະກຽມດ້ານພິທີການຕ່າງໆ ໃຫ້ແກ່ລັດຖະມົນຕີ, ຮອງລັດຖະມົນຕີ ແລະ ຄະນະຫ້ອງການ ໃນການເຄື່ອນໄຫວວຽກງານ ຢູ່ພາຍໃນ ແລະ ຕ່າງປະເທດ;
9. ຄຸ້ມຄອງຫ້ອງປະຊຸມ ແລະ ຫ້ອງຮັບແຂກ, ເຄື່ອງຮັບໃຊ້ຫ້ອງປະຊຸມຂອງກະຊວງ; ປະດັບປະດາ, ສະຖານທີ່ປະຊຸມ, ຫ້ອງປະຊຸມ, ສຳມະນາ, ພິທີງານລ້ຽງ ແລະ ສະຖານທີ່ ຂອງກະຊວງ ໃຫ້ຢູ່ສະພາບພ້ອມໃຊ້ງານຕະຫຼອດເວລາ;
10. ກະກຽມບົດອວຍພອນ ແລະ ຂອງຂວັນໃຫ້ຄະນະນຳກະຊວງ ເພື່ອອວຍພອນການນຳຂັ້ນສູງ, ບຸກຄົນສຳຄັນ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໃນໂອກາດວັນສຳຄັນຂອງຊາດ, ຂອງສາກົນ ຫຼື ໃນພິທີສຳຄັນຕ່າງໆ;

11. ຄຸ້ມຄອງ, ເກັບກຳສະຖິຕິພາຫະນະ ຂອງກະຊວງ ແລະ ຂຶ້ນແຜນບຳລຸງຮັກສາ, ສ້ອມແປງພາຫະນະ ແລະ ຕຶກອາຄານ ຂອງກະຊວງ ເພື່ອຮັບໃຊ້ວຽກງານການເຄື່ອນໄຫວວຽກງານຕ່າງໆ;
12. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະນຳຫ້ອງການ.

**ມາດຕາ 9 ໜ້າທີ່ຂອງ ພະແນກຮ່ວມມືສາກົນ**

ພະແນກຮ່ວມມືສາກົນ ມີໜ້າທີ່ດັ່ງນີ້:

1. ເປັນໃຈກາງໃນການພົວພັນປະສານງານ, ຮ່ວມປຶກສາຫາລື ແລະ ເຈລະຈາວຽກງານຮ່ວມມືສອງຝ່າຍ, ອາຊຽນ, ອະນຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງກັບຂະແໜງເຕັກໂນໂລຊີ ແລະ ການສື່ສານ ຕາມການມອບໝາຍຂອງຂັ້ນເທິງ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າເຮັດບົດລາຍງານ ກະກຽມເນື້ອໃນເອກະສານຕ່າງໆ, ກະກຽມເນື້ອໃນພົບປະ, ການປະຊຸມ, ການເຈລະຈາ, ການເຊັນສັນຍາ ດ້ານວຽກງານຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ລະຫວ່າງປະເທດ ພ້ອມທັງເຂົ້າຮ່ວມ ແລະ ອຳນວຍຄວາມສະດວກໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ;
3. ເປັນເສນາທິການໃນການຄົ້ນຄວ້າ ແລະ ປະກອບຄຳເຫັນດ້ານເນື້ອໃນ ຕໍ່ການເຂົ້າເປັນພາຄີສັນຍາສາກົນ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ, ຊຸກຍູ້ ຕິດຕາມການຈັດຕັ້ງປະຕິບັດສັນຍາ, ອະນຸສັນຍາ ແລະ ຂໍ້ຜູກພັນຕ່າງໆຂອງບັນດາກົມ, ສູນ, ອົງການ, ສະຖາບັນ ເພື່ອສະຫຼຸບສັງລວມລາຍງານຄວາມຄືບໜ້າ ກັບພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ;
4. ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ, ກິດຈະກຳ ແລະ ແຜນການຕ່າງໆ ຈາກພາກສ່ວນກ່ຽວຂ້ອງ ຢູ່ພາຍໃນກະຊວງ ແລະ ພາຍນອກ ໃນຂົງເຂດວຽກງານເຕັກໂນໂລຊີ ແລະ ການສື່ສານ ຂອງ ສປປ ລາວ ໃນຂອບສອງຝ່າຍ, ອາຊຽນ, ອະນຸພາກພື້ນ ແລະ ອົງການຈັດຕັ້ງສາກົນ;
5. ເປັນໃຈກາງປະສານງານ ແລະ ຂຶ້ນແຜນການເຄື່ອນໄຫວວຽກງານຕ່າງປະເທດປະຈຳປີ ໃຫ້ຄະນະນຳກະຊວງ ໃນຂອບສອງຝ່າຍ, ອາຊຽນ, ອະນຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
6. ຄົ້ນຄວ້າ ເອກະສານການເຊີນເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ຢູ່ພາຍໃນ ແລະ ຕ່າງປະເທດ ໃນຂອບສອງຝ່າຍ, ອາຊຽນ, ອະນຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ເພື່ອນຳສະເໜີຄະນະນຳກະຊວງ ພິຈາລະນາ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ຊ່ຽວຊານ, ພະນັກງານ ແລະ ວິຊາການຕ່າງປະເທດ ທີ່ມາເຄື່ອນໄຫວວຽກງານຕາມສັນຍາ, ກິດຈະກຳ, ໂຄງການ ຮ່ວມກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ;
8. ປະສານງານ ແລະ ຕິດຕາມ ການປະກອບພັນທະທີ່ຕິດພັນກັບວຽກງານອາຊຽນ ແລະ ອົງການຈັດຕັ້ງສາກົນຕ່າງໆ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ທີ່ ສປປ ລາວ ເຂົ້າຮ່ວມເປັນສະມາຊິກ ແລະ ດຳເນີນການຂໍອະນຸມັດປະກອບພັນທະຕາມລະບຽບການ;
9. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ຕິດຕາມ ແລະ ສະຫຼຸບລາຍງານສະພາບການ ຂອງວຽກງານຮ່ວມມືສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ, ວຽກເຈລະຈາ ແລະ ວຽກສົ່ງເສີມວິຊາການ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະໃຫ້ຂັ້ນເທິງຮັບຊາບ ຫຼື ພາກສ່ວນກ່ຽວຂ້ອງຕາມການມອບໝາຍ;

10. ຈັດກອງປະຊຸມສຳມະນາ ປຶກສາຫາລືດ້ານວິຊາການ ແລະ ເຜີຍແຜ່, ແນະນຳໃນວຽກງານຮ່ວມມືສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ, ວຽກເຈລະຈາ ແລະ ວຽກສົ່ງເສີມວິຊາການ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
11. ສະຫຼຸບ, ສັງລວມ ແລະ ຂຶ້ນແຜນສະເໜີການຮ່ວມມື ໃນຂອບສອງຝ່າຍ, ອາຊຽນ, ອານຸພາກພື້ນ ແລະ ອົງການຈັດຕັ້ງສາກົນ ເປັນປະຈຳອາທິດ, ເດືອນ, 06 ເດືອນ ແລະ ປີ ນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງ ທັງພາຍໃນກະຊວງ ແລະ ຂະແໜງການກ່ຽວຂ້ອງ;
12. ສະເໜີແຕ່ງຕັ້ງພະນັກງານຂອງພະແນກ ເຂົ້າຮ່ວມກອງປະຊຸມ ສຳມະນາ ຝຶກອົບຮົມ ຫຼື ເຄື່ອນໄຫວວຽກງານຮ່ວມມືຢູ່ພາຍໃນ ແລະ ຕ່າງປະເທດ ຕາມໜ້າທີ່ຄວາມຮັບຜິດຊອບຂອງພະແນກ;
13. ຄົ້ນຄວ້າສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານ ຂອງພະແນກ;
14. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະຫ້ອງການ.

**ມາດຕາ 10 ໜ້າທີ່ຂອງ ພະແນກປະຊາສາພັນ ແລະ ຂໍ້ມູນຂ່າວສານ**

ພະແນກປະຊາສຳພັນ ແລະ ຂໍ້ມູນຂ່າວສານ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ອອກແບບລະບົບຖານຂໍ້ມູນສະຖິຕິຂ່າວສານ, ຮູບພາບ ແລະ ພາບເຄື່ອນໄຫວ ດ້ວຍລະບົບ ເອເລັກໂຕຣນິກ, ກະດານຂ່າວແບບທັນສະໄໝ, ພິພິທະພັນມູນເຊື້ອ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
2. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ພາຍນອກ ເພື່ອອອກແບບ, ປັບປຸງ, ບໍລິຫານ ແລະ ຄຸ້ມຄອງການນຳໃຊ້ ເວັບໄຊ ແລະ ສື່ສັງຄົມອອນລາຍ ຂອງກະຊວງ ແລະ ຫ້ອງ ການ;
3. ຄົ້ນຄວ້າສັ່ງຈອງ, ຈັດຊື້ ປຶ້ມ, ວາລະສານ, ໜັງສືພິມ, ບົດຄົ້ນຄວ້າ ແລະ ເອກະສານອື່ນໆ ໃຫ້ແກ່ຄະນະນຳກະຊວງ, ບັນດາກົມ/ທຽບເທົ່າ ແລະ ເກັບຮັກສາໄວ້;
4. ຄົ້ນຄວ້າຂໍ້ມູນ, ກວດແກ້, ຮຽບຮຽງ ເນື້ອໃນບົດສຳພາດ, ບົດຖະແຫຼງຂ່າວ, ຂ່າວການເຄື່ອນໄຫວວຽກງານຂອງ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ກ່ອນອອກເຜີຍແຜ່ ແລະ ສະໜອງໃຫ້ພາກສ່ວນພາຍນອກ;
5. ຄົ້ນຄວ້າສ້າງ, ກວດແກ້ ແລະ ຮຽບຮຽງເນື້ອໃນ ປຶ້ມມູນເຊື້ອ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
6. ຄົ້ນຄວ້າອອກແບບ ແລະ ຈັດພິມ ປຶ້ມ, ວາລະສານ, ປະຕິທິນ, ປ້າຍຄຳຂວັນ ແລະ ສື່ສິ່ງພິມອື່ນໆ ຂອງກະຊວງ ເປັນແຕ່ລະໄລຍະ;
7. ຄົ້ນຄວ້າສ້າງລະບຽບ ການນຳໃຊ້ ແລະ ຮັກສາ ບັນດາອຸປະກອນໄອຊີທີ ເພື່ອຮັບໃຊ້ວຽກງານບໍລິຫານຂອງບັນດາກົມ/ທຽບເທົ່າ ພາຍໃນກະຊວງ;
8. ຄົ້ນຄວ້າອອກແບບ ລະບົບຮັກສາຄວາມປອດໄພ ແລະ ລະບົບເຂົ້າ-ອອກ ຂອງຕຶກສຳນັກງານກະຊວງ;
9. ຄຸ້ມຄອງ, ຕິດຕາມ, ບຳລຸງຮັກສາ ແລະ ປະເມີນການນຳໃຊ້ບັນດາອຸປະກອນເຄືອຂ່າຍ, ອຸປະກອນໄອທີ, ລະບົບຫ້ອງປະຊຸມທັນສະໄໝ, ລະບົບຮັກສາຄວາມປອດໄພ, ລະບົບເຂົ້າ-ອອກ ຂອງຕຶກສຳນັກງານ ເພື່ອຮັບໃຊ້ວຽກງານ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
10. ຕິດຕາມ, ເກັບກຳ ແລະ ເລືອກເຟັ້ນບັນດາບົດຂ່າວ, ພາບການເຄື່ອນໄຫວຂອງຄະນະນຳ ກະຊວງ,ບັນດາກົມ/ທຽບເທົ່າ ແລະ ສາມອົງການຈັດຕັ້ງມະຫາຊົນ ຢູ່ສູນກາງ-ທ້ອງຖິ່ນ ແລະ ຕ່າງປະເທດ ເພື່ອເຜີຍແຜ່ໃນເວັບໄຊ, ໜັງສືພິມ, ວະລະສານ ແລະ ສື່ອື່ນໆ ເປັນປະຈຳວັນ, ເດືອນ ແລະ ປີ;

11. ປະສານຫາສຳນັກງານຂ່າວ ໜັງສືພິມ, ວິທະຍຸ, ໂທລະພາບ ແລະ ອື່ນໆ ເພື່ອເກັບກຳເອົາຂ່າວ ແລະ ອອກຂ່າວ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນແຕ່ລະໄລຍະ;
12. ເກັບກຳ, ຕິດຕາມ ແລະ ກວດກາ ການນຳໃຊ້ອິນເຕີເນັດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະປີ;
13. ຊຸກຍູ້, ຕິດຕາມ ການນຳໃຊ້ບັນດາລະບົບການບໍລິການທັນສະໄໝ ແລະ ແອັບພລິເຄເຊີນ ເພື່ອຮັບໃຊ້ວຽກບໍລິຫານ ຂອງຫ້ອງການ ແລະ ກະຊວງ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ພາຍນອກ;
14. ຄົ້ນຄວ້າ ແລະ ສ້າງແຜນການຈັດສຳມະນາ ແລະ ຝຶກອົບຮົມ ໃນຫົວຂໍ້ຕ່າງໆທີ່ຕິດພັນກັບວຽກງານປະຊາສຳພັນ ແລະ ຂໍ້ມູນຂ່າວສານ ໃຫ້ບັນດາກົມ/ທຽບເທົ່າ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ;
15. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະຫ້ອງການ.

**ມາດຕາ 11 ໜ້າທີ່ຂອງ ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ**

ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຜັນຂະຫຍາຍ, ປະກອບຄຳເຫັນ ຕໍ່ນະໂຍບາຍ, ນິຕິກຳ, ແນວທາງ, ວິໄສທັດ, ຍຸດທະສາດ, ແຜນດຳເນີນງານແຫ່ງຊາດແຕ່ລະໄລຍະ ລວມທັງບັນດາສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການຂອງອາຊຽນ, ພາກພື້ນ ແລະ ສາກົນ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ສ້າງເປັນແຜນດຳເນີນງານ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳອັນລະອຽດຂອງ ຄກມດ ກຕສ ໃນແຕ່ລະໄລຍະ ເພື່ອນຳສະເໜີ ຂັ້ນເທິງ ພິຈາລະນາ;
2. ໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ນິຕິກຳ, ແນວທາງ ວິໄສທັດ, ຍຸດທະສາດ, ແຜນດຳເນີນງານແຫ່ງຊາດແຕ່ລະໄລຍະ ລວມທັງບັນດາສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການຂອງອາຊຽນ, ພາກພື້ນ ແລະ ສາກົນ ແລະ ເອກະສານອື່ນໆທີ່ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃຫ້ແກ່ພະນັກງານໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ມີຄວາມຮັບຮູ້, ເຂົ້າໃຈຄວາມສຳຄັນຂອງວຽກງານດັ່ງກ່າວ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;
3. ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານທີ່ເຮັດວຽກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ດ້ວຍການຈັດຝຶກອົບຮົມ, ສຳມະນາ ແລະ ການຈັດກອງປະຊຸມຕ່າງໆ ໂດຍສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ;
4. ພົວພັນ ແລະ ຮ່ວມມື, ພົບປະເຈລະຈາ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດເພື່ອຂົນຂວາຍເອົາການສະໜັບສະໜູນ, ການຊ່ວຍເຫຼືອທາງດ້ານທຶນຮອນ, ດ້ານວິຊາການ ແລະ ບົດຮຽນຕ່າງໆ ເພື່ອນຳໃຊ້ເຂົ້າໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ;

5. ປະສານສົມທົບກັບບັນດາກົມ/ທຽບເທົ່າ, ບໍລິສັດດ້ານໂທລະຄົມ, ໄປສະນີ ອ້ອມຂ້າງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນການລາຍງານ ແລະ ສະໜອງຂໍ້ມູນຂ່າວສານຕ່າງໆ ກ່ຽວກັບການ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ;
6. ເປັນໃຈກາງໃນການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຊຸກຍູ້, ຕິດຕາມ, ກວດກາ, ປະ ເມີນຜົນ, ສະຫຼຸບຖອດຖອນບົດຮຽນ ການຈັດຕັ້ງປະຕິບັດວຽກສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ເພື່ອນຳສະເໜີ ຄກມດ ກະຊວງ ພິຈາລະນາ ແລະ ລາຍງານ ຄຊກມດ ຊາບເປັນແຕ່ລະໄລຍະ;
7. ເຂົ້າຮ່ວມກອງປະຊຸມຢູ່ພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການສົ່ງເສີມຄວາມກ້າວໜ້າຂອງ ແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມ ຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ການສົ່ງເສີມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງ ແມ່ ແລະ ເດັກ ຕາມພາລະບົດບາດ ແລະ ຕາມການມອບໝາຍ;
8. ຂຶ້ນແຜນເຄື່ອງຮັບຜິດໃຊ້ສຳລັບການເຄື່ອນໄຫວວຽກງານວິຊາສະເພາະຂອງພະແນກແຕ່ລະໄລຍະ;
9. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 12 ຫຼັກການ

ຫ້ອງການ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງ ຫ້ອງການ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດ ສ້າງຂອງ ພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ລະບຽບກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງພັກລັດ, ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນການ 5 ປີຂອງກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 13 ແບບແຜນວິທີເຮັດວຽກ

ຫ້ອງການ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນ, ກົມກຽວກັບພາກສ່ວນທີ່ກ່ຽວຂ້ອງເພື່ອ ຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍ ງານໃຫ້ຂັ້ນເທິງ ແລະ ລັດຖະບານ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 14 ງົບປະມານ ແລະ ຕາປະທັບ**

ຫ້ອງການ ມີງົບປະມານ ແລະ ຕາປະທັບ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ຫ້ອງການ, ກົມ, ສູນ, ສະຖາບັນ, ອົງການ, ບັນດາພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ,ນະຄອນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 183/ກຕສ, ລົງວັນທີ 02 ກຸມພາ 2022 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສັນຕິສຸກ ສິມມາລາວົງ